**ມິຊຊາສະຫລອງພຣະກຣິສຕະສົມພົບ**

**ວັນທີ 24 ທັນວາ 2018**

**ມິຊຊາກາງຄືນ**



**ພຣະວໍລະສານໂດຍນັກບຸນລູກາ 2, 1-14**

ໃນເວລານັ້ນ ພຣະເຈົ້າເຊຊາເອົາກຸສໂຕມີພຣະລາຊາດຳລັດສັ່ງໃຫ້ຈົດທະບຽນສຳມະໂນຄົວທົ່ວຈັກກະພົບ. ການຈົດທະບຽນຄັ້ງທຳອິດໄດ້ທຳຂຶ້ນໃນເວລາທ່ານຊີຣີໂນເປັນຜູ້ປົກຄອງແຂວງຊີຣີອາ, ຄົນທັງຫລາຍຕ່າງໄປຈົດທະບຽນສຳມະໂນຢູ່ບ້ານເກົ່າເມືອງເດີມຂອງຕົນ. ທ່ານຢໍແຊກໍໄດ້ຈາກເມືອງນາຊາແລັດແຂວງກາລິເລໄປພ້ອມກັບພຣະນາງມາຣີອາຜູ້ພັນລະຍາກຳລັງຖືພາຢູ່, ເພື່ອໄປຈົດທະບຽນຢູ່ເບັດເລແຮມ, ເມືອງຂອງກະສັດດາວິດໃນແຂວງຢູເດ. ຍ້ອນວ່າທ່ານສືບເຊື້ອສາຍເປັນບຸດຫລານຂອງກະສັດດາວິດ.

ເວລາທ່ານທັງສອງຢູ່ເມືອງນັ້ນ ກໍພໍດີເຖິງເວລາພຣະນາງປະສູດ. ພຣະນາງກໍໄດ້ປະສູດບຸດຫົວປີແລະເອົາແພມາຫົ່ມໃຫ້ ແລ້ວວາງລົງໃນຮາງຫຍ້າ, ຍ້ອນວ່າບໍ່ມີບ່ອນພັກເຊົາໃນໂຮງແຮມ. ໃນບໍລິເວນນັ້ນ ມີຊຸມພາບານພວກໜຶ່ງທີ່ອາໄສຢູ່ໃນທົ່ງນາແລະປ່ຽນກັນເຝົ້າເບິ່ງຝູງສັດຂອງຕົນໃນເວລາກາງຄືນ. ເທວະດາຂອງພຣະເປັນເຈົ້າໄດ້ປະຈັກແກ່ພວກເຂົາ ແລະມີແສງສະວ່າງແຫ່ງສີມຸງຄຸນຂອງພຣະເປັນເຈົ້າຫ້ອມລ້ອມພວກເຂົາ. ພວກເຂົາຕົກໃຈຕົວສັ່ນຢ້ານກົວຢ່າງໃຫຍ່. ເທວະດາຈຶ່ງບອກວ່າ: ພວກເຈົ້າຢ່າຢ້ານກົວເລີຍ, ເຮົາມາແຈ້ງຂ່າວຄວາມຍິນດີອັນຍິ່ງໃຫຍ່ສຳລັບປະຊາຊົນທຸກຄົນໃຫ້ພວກເຈົ້າຊາບຄືວ່າມື້ນີ້ເອງ, ຢູ່ເມືອງຂອງກະສັດດາວິດ, ອົງຜູ້ບັນດານຄວາມຣອດ ຜູ້ແມ່ນພຣະກຣິສໂຕໄດ້ບັງເກີດມາ, ພວກເຈົ້າຈະຮູ້ຈັກພຣະອົງດ້ວຍສຳຄັນນີ້ຄື: ພວກເຈົ້າຈະພົບເຫັນກຸມານນ້ອຍຜູ້ໜຶ່ງ ຫົ່ມແພນອນຢູ່ໃນຮາງຫຍ້າ.

ທັນໃດນັ້ນຝູງເທວະດາແຫ່ງກອງທັບສະຫວັນເປັນຈຳນວນມາກມາຍ ກໍຮ່ວມສຽງກັບເທວະດາອົງນັ້ນຮ້ອງຍ້ອງຍໍສັນລະເສີນພຣະເປັນເຈົ້າວ່າ: ສີມຸງຄຸນໃຫ້ພຣະເປັນເຈົ້າຢູ່ສະຫວັນສູງສຸດ ແລະສັນຕິສຸກຈົ່ງມີແກ່ຄົນຊອບທຳໃນແຜ່ນດິນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 2, 1-14**

ວັນເວລາແຫ່ງການລໍຖ້າອັນຍາວນານໄດ້ມາເຖິງ ອັນແມ່ນວັນຊຶ່ງພຣະບຸດພຣະເຈົ້າໄດ້ລົງມາເກີດເປັນມະນຸດເພື່ອຢູ່ນຳພວກເຮົາ. ພຣະອົງລົງມາຫາພວກເຮົາເພື່ອນຳເອົາສັນຕິສຸກ, ຄວາມຊອບທຳແລະຄວາມຮັກຂອງພຣະບິດາເຈົ້າໃຫ້ກັບມະນຸດ. ແຕ່ບໍ່ມີໃຜຕ້ອນຮັບພຣະອົງ. ບໍ່ມີໃຜເຫັນຄວາມສຳຄັນຂອງການສະເດັດມາຂອງພຣະອົງ. ແລະຍິ່ງໄປກວ່ານັ້ນກະສັດເຮຣົດຍັງມີຄຳສັ່ງໃຫ້ທະຫານຊອກຫາພຣະເຢຊູກຸມານເພື່ອກຳຈັດພຣະອົງ. ຍ້ອນຢ້ານພຣະອົງຈະມາຍຶດອຳນາດຂອງຕົນ. ເທົ່ານັ້ນຍັງບໍ່ພໍເມື່ອພຣະເຢຊູເຈົ້າໃຫຍ່ຂຶ້ນມາແມ່ນແຕ່ໄທບ້ານໄທເມືອງຂອງພຣະອົງກໍບໍ່ຕ້ອນຮັບພຣະອົງ. ແລະທ້າຍສຸດ, ຄົນທີ່ພຣະອົງໄດ້ປິ່ນປົວ, ຂັບໄລ່ຜີປີສາດ ແລະສັ່ງສອນເທດສະໜາ, ພວກເຂົາກໍບໍ່ຕ້ອນຮັບພຣະອົງ. ສິ່ງນີ້ສະແດງອອກດ້ວຍການທີ່ພຣະເຢຊູເຈົ້າຖືກກ່າວຫາ, ຖືກຕັດສິນ, ຖືກທໍລະມານ, ຖືກຂ້ຽນຕີແລະຖືກຄຶງໃສ່ກາງເຂນແລະຕາຍ.

ສິ່ງເຫລົ່ານີ້ສະທ້ອນໃຫ້ພວກເຮົາເຫັນຫຍັງ? ສະທ້ອນໃຫ້ພວກເຮົາເຫັນວ່າແມ່ນແຕ່ລູກຂອງພຣະເປັນເຈົ້າເອງຍັງຕ້ອງຖືກທໍລະມານແລະຕາຍ. ຍ້ອນຫຍັງ? ຍ້ອນຮັກມະນຸດ, ຮັກພວກເຮົາແຕ່ລະຄົນ. ພຣະອົງຈຶ່ງຍອມຮັບເອົາຄວາມຕາຍເພື່ອໃຫ້ພວກເຮົາໄດ້ຮອດແລະມີຊີວິດ.

ແນ່ນອນໃນຄືນສັກສິດນີ້, ພວກເຮົາແຕ່ລະຄົນທີ່ມານົບໄຫວ້ນຳມັດສະການພຣະບຸດຂອງພຣະເຈົ້າ ພວກເຮົາລ້ວນແຕ່ມີຄວາມສຸກ, ຄວາມທຸກ, ຄວາມຫວັງ, ຄວາມສິ້ນຫວັງ ແລະຄຳວອນຂໍທີ່ແຕກຕ່າງກັນ. ແຕ່ມີສິ່ງໜຶ່ງທີ່ພວກເຮົາທຸກຄົນໄດ້ຮັບຢ່າງດຽວກັນຈາກພຣະອົງຄືຄວາມທຸເລົາໃຈ, ຄວາມຫວັງແລະພະລັງແຫ່ງຄວາມເຊື່ອ ເພື່ອພວກເຮົາຈະໄດ້ສືບຕໍ່ສູ້ຊົນກັບສະພາບຊີວິດຂອງຕົນ. ແນ່ນອນ, ຖ້າພວກເຮົາມີພຣະເຈົ້າຄຽງຂ້າງ, ນຳພຣະອົງແລະພ້ອມກັບພຣະອົງພວກເຮົາຈະຜ່ານຜ່າພາຍຸຊີວິດແລະຄວາມຫຍຸ້ງຍາກໄປໄດ້ ດ້ວຍອາໄສພຣະຄຸນແລະຄວາມຊ່ວຍເຫລືອຈາກພຣະເຈົ້າ. ນີ້ແລແມ່ນຄວາມຫວັງໃນຄວາມເຊື່ອຂອງພວກເຮົາ. ແລະຄວາມເຊື່ອນີ້ຈະຊ່ວຍພວກເຮົາໃຫ້ຮອດ.

ຜູ້ທີ່ເປັນແບບຢ່າງໃນຄວາມເຊື່ອຊຶ່ງພວກເຮົາເຫັນໃນຖໍ້າຂອງພຣະກຸມານເຢຊູຄືນັກບຸນຢໍແຊແລະແມ່ພຣະມາຣີອາ. ນັກບຸນຢໍແຊເຊື່ອໃນຄຳເວົ້າຂອງພຣະເຈົ້າຜ່ານທາງເທວະດາທີ່ບອກກັບເພິ່ນໃນຄວາມຝັນວ່າ ນາງມາຣີອາຜູ້ເປັນຄູ່ໝັ້ນຂອງທ່ານນີ້ຈະຖືພາດ້ວຍລິດຂອງພຣະຈິດເຈົ້າ. ເມື່ອນັກບຸນຢໍແຊຮັບຟັງດ້ວຍຄວາມນົບນອບແລະດ້ວຍຄວາມເຊື່ອ ກໍບໍ່ໝາຍຄວາມວ່າທ່ານຈະບໍ່ພົບກັບຄວາມຫຍຸ້ງຍາກແລະບັນຫາຕ່າງໆທີ່ຕາມມາໃນຊີວິດ.

ແມ່ພຣະມາຣີອາກໍເຊັ່ນດຽວກັນ, ເມື່ອຕອບຮັບຕໍ່ເທວະດາມາແຈ້ງຂ່າວວ່າ: ຂໍໃຫ້ເປັນໄປໃນຂ້າພະເຈົ້າຕາມຄຳເວົ້າຂອງທ່ານເທີ້ນ. ກໍບໍ່ໝາຍຄວາມວ່າທຸກສິ່ງເປັນໄປດ້ວຍຄວາມສະດວກສະບາຍ. ແຕ່ແມ່ພຣະມາຣີອາແລະນັກບຸນຢໍແຊກໍຍັງຊື່ສັດ, ໝັ້ນຄົງແລະໄວ້ວາງໃຈໃນພຣະເຈົ້າຕະຫລອດຊີວິດຂອງພວກທ່ານ.

ຂໍໃຫ້ວັນພຣະເຈົ້າບັງເກີດມານີ້ຊ່ວຍພວກເຮົາໃຫ້ເປີດໃຈມອບຖວາຍຄວາມຫຍຸ້ງຍາກແລະບັນຫາໃນຊີວິດຂອງພວກເຮົາແດ່ພຣະກຸມານເຢຊູ ເພື່ອພຣະອົງຈະຮັບຟັງແລະຊ່ວຍເຫລືອພວກເຮົາຕາມຄຳວອນຂໍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ